ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 2121 /ອຄ.ທຄວ

ນະຄອນຫຼວງວຽງຈັນ, ລົງວັນທີ 14 OCT 2015

# ແຈ້ງການ

ເຖິງ: - ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ
- ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ, ເທດສະບານ
- ບັນດາຫົວໜ່ວຍທຸລະກິດ ທີ່ໄດ້ຂຶ້ນທະບຽນວິສາຫະກິດແລ້ວ

ເລື່ອງ: ການກວດກາ ຕິດຕາມ ການມີຕົວຕົນຂອງວິສາຫະກິດ ພາຍຫຼັງທີ່ໄດ້ຂຶ້ນທະບຽນວິສາຫະກິດ

- ອີງຕາມບົດບັນຍັດ ມາດຕາ 22, ກົດໝາຍວ່າດ້ວຍວິສາຫະກິດ, ສະບັບປັບປຸງ - 2013.

ເພື່ອໃຫ້ການກວດກາ ຕິດຕາມ ການມີຕົວຕົນຂອງວິສາຫະກິດ ພາຍຫຼັງທີ່ໄດ້ຂຶ້ນທະບຽນວິສາຫະກິດ ເປັນລະບົບ ມີຄວາມຕໍ່ເນື່ອງ ແນໃສ່ເພີ່ມທະວີຄວາມສັກສິດໃນການຄຸ້ມຄອງ ຕາມເນື້ອໃນຈິດໃຈ ຂອງບົດບັນຍັດມາດຕາ 22 ຂອງກົດໝາຍວ່າດ້ວຍວິສາຫະກິດ, ສະບັບປັບປຸງ - 2013, ກະຊວງອຸດສາຫະກຳ ແລະ ການຄ້າ ແຈ້ງໃຫ້ພາກສ່ວນທີ່ກ່ຽວຂ້ອງ ຊາບ ແລະ ຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ ດັ່ງນີ້ :

1. ຄຳວ່າ : "ການມີຕົວຕົນຂອງວິສາຫະກິດ" ຕາມແຈ້ງການສະບັບນີ້ ໝາຍເຖິງການເຄື່ອນໄຫວ ຫລື ບໍ່ເຄື່ອນໄຫວທຸລະກິດຂອງວິສາຫະກິດໃດໜຶ່ງ ພາຍຫຼັງທີ່ເຈົ້າໜ້າທີ່ທະບຽນວິສາຫະກິດ ໄດ້ຂຶ້ນທະບຽນວິສາຫະກິດໃຫ້ແລ້ວ ແລະ ບໍ່ມີຄວາມໝາຍກ່ຽວຂ້ອງໃດໆ ກັບຄຳວ່າ : "ການສິ້ນສຸດສະພາບຄວາມເປັນນິຕິບຸກຄົນ" ຂອງວິສາຫະກິດ ຕາມທີ່ໄດ້ກຳນົດໄວ້ໃນວັກສາມ ມາດຕາ 72 ຂອງກົດໝາຍວ່າດ້ວຍວິສາຫະກິດ, ສະບັບປັບປຸງ - 2013 ;

2. ພາຍຫຼັງຂຶ້ນທະບຽນວິສາຫະກິດແລ້ວ ວິສາຫະກິດຕ້ອງເລີ່ມເຄື່ອນໄຫວ ພາຍໃນກຳນົດ 90 ວັນ ນັບແຕ່ວັນທີ່ໄດ້ຂຶ້ນທະບຽນວິສາຫະກິດ ເປັນຕົ້ນໄປ.

ຄຳວ່າ: "ເລີ່ມເຄື່ອນໄຫວ" ຕາມແຈ້ງການສະບັບນີ້ ຫລື ຕາມມາດຕາ 22 ຂອງກົດໝາຍວ່າດ້ວຍວິສາຫະກິດ, ສະບັບປັບປຸງ - 2013 ໝາຍເຖິງ ການດຳເນີນກິດຈະກຳຕ່າງໆ ທີ່ກ່ຽວຂ້ອງ ໂດຍກົງກັບການເລີ່ມຕົ້ນທຸລະກິດ ຫລື ການເຄື່ອນໄຫວທຸລະກິດ ເຊັ່ນ: ກິດຈະກຳການຂໍອະນຸຍາດຕ່າງໆ ທີ່ກ່ຽວຂ້ອງກັບທຸລະກິດຂອງຕົນ (ຕົວຢ່າງ: ການ ຂໍອະນຸຍາດປຸກສ້າງໂຮງງານ ຫລື ການຂໍອະນຸຍາດນຳເຂົ້າ - ສົ່ງອອກສິນຄ້າ...), ການປຸກສ້າງໂຮງງານ ຫລື ການເຮັດສັນຍາທີ່ກ່ຽວກັບທຸລະກິດຂອງຕົນ, ການລະດົມຮຸ້ນ, ການນຳທຶນເຂົ້າມາ ເປັນຕົ້ນ ;

3. ຫຼັງຈາກຄົບກຳນົດເວລາ 90 ວັນດັ່ງກ່າວ ວິສາຫະກິດທີ່ກ່ຽວຂ້ອງ ຕ້ອງລາຍງານການເຄື່ອນໄຫວຂອງຕົນ ໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດທີ່ກ່ຽວຂ້ອງ ພາຍໃນກຳນົດ 10 ວັນລັດຖະການ ນັບແຕ່ວັນຄົບກຳນົດ 90 ວັນເປັນຕົ້ນໄປ (ການລາຍງານຕ້ອງປະຕິບັດ ຕາມແບບຟອມ ຈ(1) ຄັດຕິດມາພ້ອມນີ້);

4. ໃນງວດໜຶ່ງຂອງທຸກໆປີ (ແຕ່ເດືອນ 1 ເຖິງທ້າຍເດືອນ 3), ທຸກວິສາຫະກິດ ຕ້ອງລາຍງານສະພາບ (ການມີຕົວຕົນ) ແລະ ຜົນການເຄື່ອນໄຫວທຸລະກິດ ປະຈຳປີ ຂອງປີຜ່ານມາ (ປີປະຕິທິນ) ໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດທີ່ກ່ຽວຂ້ອງ ຕາມແບບຟອມ ທີ່ໄດ້ກຳນົດໄວ້ໃນ ຈ(2.1 ເຖິງ 2.6) ຄັດຕິດມາພ້ອມນີ້ ;

5. ວິສາຫະກິດທີ່ບໍ່ລາຍງານການເຄື່ອນໄຫວ ຕາມກຳນົດເວລາ ທີ່ບົ່ງໄວ້ໃນ ຂໍ້ 3 ແລະ 4 ເທິງນີ້ ຫຼື ລາຍງານ, ແຕ່ບໍ່ຈະແຈ້ງ ເຊັ່ນ ບາງກິດຈະກຳການເຄື່ອນໄຫວ ບໍ່ກ່ຽວຂ້ອງໂດຍກົງກັບທຸລະກິດຂອງວິສາຫະກິດ ໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດທີ່ກ່ຽວຂ້ອງ ແຈ້ງໃຫ້ວິສາຫະກິດດັ່ງກ່າວ ເຂົ້າມາອະທິບາຍເຫດຜົນ, ຖ້າບໍ່ມາພົບພາຍໃນກຳນົດ ສິບວັນ ລັດຖະການ ນັບແຕ່ວັນໄດ້ຮັບແຈ້ງ ຫຼື ມາພົບແຕ່ຄຳຕອບ ບໍ່ມີເຫດຜົນພຽງພໍ ວິສາຫະກິດທີ່ກ່ຽວຂ້ອງຈະຖືກພິຈາລະນາ ໃຫ້ໂຈະການເຄື່ອນໄຫວທຸລະກິດ ຫລື ດຳເນີນການຍຸບເລີກ ຕາມຂັ້ນຕອນທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ ສະບັບປັບປຸງ - 2013.

6. ທຸກຂໍ້ມູນ ທີ່ແຈ້ງໃນແບບຟອມ ຈ(1) ແລະ ຈ(2) ຕ້ອງຖືກຕ້ອງ ຕາມຄວາມເປັນຈິງ ກໍລະນີລະເມີດ ຜູ້ລະເມີດຕ້ອງຮັບຜິດຊອບ ຕໍ່ໜ້າກົດໝາຍ ຖານແຈ້ງຂໍ້ມູນເທັດ ຕໍ່ທາງລັດຖະການ ;

7. ຜ່ານການກວດສອບບົດລາຍງານ ຫລື ຟັງຄຳອະທິບາຍຂອງວິສາຫະກິດທີ່ກ່ຽວຂ້ອງ, ຫາກ ເຈົ້າໜ້າທີ່ທະບຽນວິສາຫະກິດ ມີຂໍ້ສົງໄສ ກໍສາມາດລົງກວດກາຕົວຈິງໄດ້;

8. ໃນກໍລະນີ ຄຳອະທິບາຍມີເຫດຜົນພຽງພໍ ທີ່ພາໃຫ້ວິສາຫະກິດ ບໍ່ສາມາດປະຕິບັດໄດ້ຕາມເງື່ອນໄຂຕາມຂໍ້ 3, 4 ແລະ 5 ເທິງນີ້, ໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດທີ່ກ່ຽວຂ້ອງ ເຮັດບົດບັນທຶກ ເຊັນຮ່ວມກັບວິສາຫະກິດທີ່ກ່ຽວຂ້ອງ. ບົດບັນທຶກຕ້ອງປະກອບດ້ວຍເນື້ອໃນຕົ້ນຕໍ ຄື: 1) ສິ່ງທີ່ເຮັດບໍ່ທັນໄດ້ ແລະ ເຫດຜົນປະກອບ; 2) ກຳນົດເວລາ ທີ່ຈະປະຕິບັດໃຫ້ຖືກຕ້ອງ (ສູງສຸດຕ້ອງບໍ່ເກີນ 90 ວັນ) ແລະ 3) ຄຳປະຕິຍານ. ສຳລັບການລະເມີດຄັ້ງທີ 2, ວິສາຫະກິດທີ່ກ່ຽວຂ້ອງຈະຖືກພິຈາລະນາ ໃຫ້ໂຈະການເຄື່ອນໄຫວທຸລະກິດ ຫລືດຳເນີນການຍຸບເລີກ ຕາມຂັ້ນຕອນທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ ສະບັບປັບປຸງ - 2013;

9. ທຸກຄັ້ງທີ່ມີການປ່ຽນແປງທີ່ຕັ້ງສຳນັກງານ, ວິສາຫະກິດທີ່ກ່ຽວຂ້ອງ ຕ້ອງສະເໜີການປ່ຽນແປງເນື້ອໃນທະບຽນວິສາຫະກິດ ພາຍໃນກຳນົດ 30 ວັນ ນັບແຕ່ວັນທີ່ໄດ້ເຊັນສັນຍາເຊົ່າ ຫລື ຊື້ ຫລື ວັນມອບ-ຮັບການກໍ່ສ້າງທີ່ຕັ້ງສຳນັກງານໃໝ່ເປັນຕົ້ນໄປ. ພາຍຫຼັງໄດ້ຮັບການປ່ຽນແປງເນື້ອໃນທະບຽນວິສາຫະກິດໃໝ່ແລ້ວ ວິສາຫະກິດ ຕ້ອງເຮັດໜັງສືເປັນລາຍລັກອັກສອນ ແຈ້ງໃຫ້ພາກສ່ວນສ່ວຍສາອາກອນທີ່ກ່ຽວຂ້ອງ ຊາບ ກ່ຽວກັບທີ່ຕັ້ງສຳນັກງານໃໝ່ຂອງຕົນ ພາຍໃນ 5 ວັນລັດຖະການ ນັບແຕ່ວັນທີ່ໄດ້ຂຶ້ນທະບຽນວິສາຫະກິດ ປ່ຽນແປງເນື້ອໃນດັ່ງກ່າວເປັນຕົ້ນໄປ;

10. ເບີໂທລະສັບຕິດຕໍ່ຂອງວິສາຫະກິດ ທີ່ໄດ້ລະບຸໄວ້ໃນໃນແບບຟອມ ຈ(1), ຈ(2) ຕ້ອງມີ ສອງເບີ ແລະຕ້ອງເປັນຂອງຜູ້ອຳນວຍການ ຫລື ຜູ້ຈັດການ ຫລື ຜູ້ເປັນເຈົ້າຂອງວິສາຫະກິດ ທີ່ມີອຳນາດຕັດສິນ ຫລື ເປັນເບີຂອງຜູ້ທີ່ຜູ້ອຳນວຍການ ຫລືຜູ້ຈັດການຫລືຜູ້ເປັນເຈົ້າຂອງວິສາຫະກິດ ມອບໝາຍໃຫ້ ຕິດຕໍ່ພົວພັນຢ່າງເປັນທາງການ

ແທນກັບທາງລັດຖະການ (ໂດຍສະເພາະເຈົ້າໜ້າທີ່ທະບຽນວິສາຫະກິດ), ໃນນີ້ :

- ການປະສານງານ ຕິດຕໍ່ພົວພັນ ຂອງເຈົ້າໜ້າທີ່ທະບຽນວິສາຫະກິດ ກັບຜູ່ທີ່ຜູ່ອໍານວຍການ ຫລື ຜູ່ຈັດການ ຫລື ຜູ່ເປັນເຈົ້າຂອງວິສາຫະກິດມອບໝາຍໃຫ້ນັ້ນ ຖືວ່າ : ເປັນການຕິດຕໍ່ປະສານງານ ກັບຜູ່ອໍານວຍການ ຫລື ຜູ່ຈັດການ ຫລື ຜູ່ເປັນເຈົ້າຂອງວິສາຫະກິດເອງ ຊຶ່ງບໍ່ສາມາດປະຕິເສດຄວາມຮັບຜິດຊອບດ້ວຍຂໍ້ອ້າງໃດໆໄດ້ ;

- ເບີໂທລະສັບຕິດຕໍ່ຂອງວິສາຫະກິດ ຕ້ອງສາມາດຕິດຕໍ່ໄດ້ຢ່າງເປັນປົກກະຕິ ໃນໂມງລັດຖະການ, ໃນກໍລະນີປ່ຽນເບີ ຫລື ມີບັນຫາ ຕ້ອງແຈ້ງໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດທີ່ກ່ຽວຂ້ອງຊາບ ຊ້າສຸດບໍ່ເກີນ 3 ວັນລັດຖະການ ນັບແຕ່ເວລາທີ່ມີການປ່ຽນ ຫລື ມີບັນຫາ ເປັນຕົ້ນໄປ. ອີງໃສ່ເບີຕິດຕໍ່ດັ່ງກ່າວ ເມື່ອເຈົ້າໜ້າທີ່ທະບຽນວິສາຫະກິດ ໄດ້ຕິດຕໍ່ເຖິງ 3 ຄັ້ງ ແຕ່ລະຄັ້ງຢ່າງໜ້ອຍ ຫ່າງກັນ 2 ວັນລັດຖະການ ກໍຍັງບໍ່ສາມາດຕິດຕໍ່ໄດ້ ໃຫ້ຖືວ່າ ວິສາຫະກິດດັ່ງກ່າວ ໄດ້ຮັບການຕິດຕໍ່ ແຕ່ບໍ່ເຂົ້າພົບ ແລະ ຈະຖືກໃຫ້ໂຈະການເຄື່ອນໄຫວທຸລະກິດ ຫລື ດໍາເນີນການຍຸບເລີກ ຕາມຂັ້ນຕອນທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ ສະບັບປັບປຸງ - 2013.

11. ໃນເວລາຈັດຕັ້ງປະຕິບັດແຈ້ງການສະບັບນີ້ ຫາກມີສະພາບ ຫລື ມີບັນຫາໃດ ໃຫ້ລາຍງານກະຊວງອຸດສາຫະກໍາ ແລະ ການຄ້າ ຊາບ ເພື່ອຊີ້ນໍາ ຫລື ແກ້ໄຂ ໂດຍໄວ.

ແຈ້ງມາເພື່ອຊາບ ແລະ ຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ.

ຕ. ລັດຖະມົນຕີວ່າການກະຊວງອຸດສາຫະກໍາ ແລະ ການຄ້າ

ສຽວສະຫວາດ ສະແຫວງສຶກສາ

แบบฟอม จ (1)

ຊື່ວິສາຫະກິດ: ……………………. ;

ໃບທະບຽນວິສາຫະກິດ, ເລກທີ…/.., ລົງວັນທີ……; ລະຫັດວິສາຫະກິດ……………………;

ເລກປະຈຳຕົວຜູ້ເສຍອາກອນ:……….;

ວິສາຫະກິດພາຍໃນ ( ) / ຮ່ວມທຶນ - ພາຍໃນ (...%) ຕ່າງປະເທດ (…%) ; ຕ່າງປະເທດ ( );

ທີ່ຕັ້ງທຸລະກິດ (ສຳລັບວິສາຫະກິດສ່ວນບຸຄົນ) ຫລື ທີ່ຕັ້ງສຳນັກງານ: ບ້ານ …., ເມືອງ…., ແຂວງ….;

ເບີໂທຕິດຕໍ່ທາງລັດຖະການ: (ເບີທີໜຶ່ງ ……………… ) ແລະ (ເບີທີສອງ ……………………… ).

---

# ລາຍງານ

## ກິດຈະກຳການເຄື່ອນໄຫວໃນໄລຍະ 90 ວັນ ນັບແຕ່ວັນໄດ້ການຂຶ້ນທະບຽນວິສາຫະກິດ

| ລາຍການກິດຈະກຳການເຄື່ອນໄຫວທີ່ກ່ຽວກັບການເລີ່ມຕົ້ນທຸລະກິດຂອງວິສາຫະກິດ | ເລກທີ…/.., ລົງວັນທີ… ຫລື ຊື່ສະຖານທີ່ | ເປັນຈຳນວນ ຫລື ມູນຄ່າ ຫລື ສຳເລັດຈັກ % |
|---|---|---|
| ກ. ປະເພດສັນຍາກ່ຽວກັບທຸລະກິດ | | |
| 1. ສັນຍາວ່າດ້ວຍ…….. | ເລກທີ…/.., ລົງວັນທີ… | - |
| 2. ສັນຍາວ່າດ້ວຍ……… | ເລກທີ…/.., ລົງວັນທີ… | - |
| ຂ. ປະເພດເອກະສານຂໍອະນຸຍາດ, ໃບຢັ້ງຢືນຕ່າງໆ | | |
| 1. ໃບອະນຸຍາດກ່ຽວກັບ…… | ເລກທີ…/.., ລົງວັນທີ… | - |
| 2. ໃບຢັ້ງຢືນກ່ຽວກັບ……. | ເລກທີ…/.., ລົງວັນທີ… | - |
| ຄ. ປະເພດກິດຈະກຳການເຄື່ອນໄຫວທຸລະກິດຕົວຈິງ | | |
| 1. ໄດ້ລົງມືປຸກສ້າງໂຮງງານ (ຕົວຢ່າງ) | ຢູ່ໃສ | ຈັກ % |
| 2. ໄດ້ສົ່ງອອກສິນຄ້າ (ຕົວຢ່າງ) | - | ມູນຄ່າ (ລກ) |
| 3. ບຸກເບີກທີ່ດິນ (ຕົວຢ່າງ) | ຢູ່ໃສ | ຈັກ ເຮັກຕາ |
| ງ. ປະເພດກິດຈະກຳອື່ນໆ ທີ່ກ່ຽວກັບທຸລະກິດຂອງວິສາຫະກິດ (ຖ້າມີ) | | |
| ……. | | |
| …….. | | |

ທີ່…….., ລົງວັນທີ……………

ຊື່ ແລະ ລາຍເຊັນຜູ້ອຳນວຍການ ( )/ ຜູ້ຈັດການ ( )/ ເຈົ້າຂອງວິສາຫະກິດ ( )

(ຜູ້ເຊັນຕອ້ງແມ່ນຜູ້ທີ່ໄດ້ຮັບມອບໝາຍ ແລະ ຕາງໜ້າວິສາຫະກິດຢ່າງແທ້ຈິງ)

<u>ແບບຟອມ ຈ (2.1 - ສຳລັບວິສາຫະກິດສ່ວນບຸກຄົນ)</u>

ຊື່ວິສາຫະກິດ: ...................... ;

ໃບທະບຽນວິສາຫະກິດ, ເລກທີ.../.., ລົງວັນທີ......; ລະຫັດວິສາຫະກິດ......................;

ເລກປະຈຳຕົວຜູ້ເສຍອາກອນ:.........;

ວິສາຫະກິດພາຍໃນ ( ) / ວິສາຫະກິດຕ່າງປະເທດ (....) ຊື່ປະເທດ................;

ທີ່ຕັ້ງທຸລະກິດ: ບ້ານ ...., ເມືອງ....., ແຂວງ.....;

ເບີໂທຕິດຕໍ່ທາງລັດຖະການ: (ເບີທີໜຶ່ງ ................. ) ແລະ (ເບີທີສອງ ..............).

---

# ລາຍງານ

## ສະພາບ(ການມີຕົວຕົນ) ແລະ ຜົນການເຄື່ອນໄຫວທຸລະກິດ ປະຈຳປີ.............

| ເນື້ອໃນ | ໝາຍເຫດ |
|---|---|
| ກ. ສະພາບ (ການມີຕົວຕົນ) ໃນດ້ານທົ່ວໄປ<br>1. ຊື່ ແລະ ນາມສະກຸນຜູ້ເປັນເຈົ້າຂອງ:........................<br>2. ທຶນຈົດທະບຽນວິສາຫະກິດ:........................................ ລ້ານກີບ<br>3. ທຶນທັງໝົດຂອງວິສາຫະກິດ:........................................ ລ້ານກີບ<br>4. ປະເພດທຸລະກິດທີ່ໄດ້ເຄື່ອນໄຫວທຸລະກິດ ຕົວຈິງໃນປີ ລາຍງານ:<br>4.1) ປະເພດທຸລະກິດທີໜຶ່ງ.......<br>4.2) ປະເພດທຸລະກິດທີສອງ...... | |
| 5. ປະເພດທຸລະກິດທີ່ບໍ່ໄດ້ເຄື່ອນໄຫວທຸລະກິດຕົວຈິງ ໃນປີລາຍງານ:<br>5.1) ປະເພດທຸລະກິດທີໜຶ່ງ.......<br>5.2) ປະເພດທຸລະກິດທີສອງ...... | ບົ່ງສາເຫດຂອງການບໍ່ເຄື່ອນໄຫວ:<br>1).........<br>2)......... |
| ຂ. ສະພາບ (ການມີຕົວຕົນ) ໃນດ້ານການເຄື່ອນໄຫວທຸລະກິດ (ໃນປີ):<br>1. ຕົວເລກທຸລະກິດ (ລວມ): ............................................. ລ້ານກີບ<br>2. ຕົວເລກພັນທະດ້ານອາກອນ (ລວມ): .............................. ລ້ານກີບ | |

ຊື່ ແລະ ລາຍເຊັນເຈົ້າຂອງວິສາຫະກິດ ( ) ຫລື ຜູ້ຈັດການ ( )

<u>ໝາຍເຫດ :</u> ໃຫ້ຄັດຕິດສຳເນົາ : 1) ໃບທະບຽນວິສາຫະກິດ;

แบบฟอม จ (2.2 - ສຳລັບວິສາຫະກິດຮຸ້ນສ່ວນສາມັນ)

ຊື່ວິສາຫະກິດ: ..............................................;

ໃບທະບຽນວິສາຫະກິດ, ເລກທີ.../.., ລົງວັນທີ........; ລະຫັດວິສາຫະກິດ........................;

ເລກປະຈຳຕົວຜູ້ເສຍອາກອນ:.............................;

ວິສາຫະກິດ - ພາຍໃນ ( ) / ຮ່ວມທຶນ: ພາຍໃນ (...%), ຕ່າງປະເທດ (...%) / ຕ່າງປະເທດ ( );

ທີ່ຕັ້ງສຳນັກງານ : ບ້ານ ...., ເມືອງ...., ແຂວງ..........;

ເບີໂທຕິດຕໍ່ທາງລັດຖະການ : (ເບີທີໜຶ່ງ .................. ) ແລະ (ເບີທີສອງ.........................).

---

# ລາຍງານ

## ສະພາບ(ການມີຕົວຕົນ) ແລະ ຜົນການເຄື່ອນໄຫວທຸລະກິດ ປະຈຳປີ..............

| ເນື້ອໃນ | ໝາຍເຫດ |
|---|---|
| ກ. ສະພາບ (ການມີຕົວຕົນ) ໃນດ້ານທົ່ວໄປ<br>1. ຈຳນວນຂາຮຸ້ນ:..... ຄົນ; ມູນຄ່າຮຸ້ນ:................................... ລ້ານກີບ<br>2. ຊື່ ແລະ ນາມສະກຸນຜູ້ຈັດການ (ຜູ້ຕິດຮູບໃນໃບທະບຽນ):..................<br>3. ທຶນຈົດທະບຽນວິສາຫະກິດ: ........................................... ລ້ານກີບ<br>4. ທຶນທັງໝົດຂອງວິສາຫະກິດ: ............................................ ລ້ານກີບ<br>5. ປະເພດທຸລະກິດທີ່ໄດ້ເຄື່ອນໄຫວທຸລະກິດ ຕົວຈິງໃນປີ ລາຍງານ:<br>5.1) ປະເພດທຸລະກິດທີໜຶ່ງ.......<br>5.2) ປະເພດທຸລະກິດທີສອງ...... | |
| 6. ປະເພດທຸລະກິດທີ່ບໍ່ໄດ້ເຄື່ອນໄຫວທຸລະກິດຕົວຈິງ ໃນປີລາຍງານ :<br>6.1) ປະເພດທຸລະກິດທີໜຶ່ງ.......<br>6.2) ປະເພດທຸລະກິດທີສອງ...... | ບັ້ງສາເຫດຂອງການບໍ່ເຄື່ອນໄຫວ :<br>1).......<br>2)......... |
| ຂ. ສະພາບ (ການມີຕົວຕົນ) ໃນດ້ານການເຄື່ອນໄຫວທຸລະກິດ (ໃນປີ) :<br>1. ຕົວເລກທຸລະກິດ (ລວມ):............................................... ລ້ານກີບ<br>2. ຕົວເລກພັນທະດ້ານອາກອນ (ລວມ):.............................. ລ້ານກີບ | |

ຊື່ ແລະ ລາຍເຊັນຜູ້ຈັດການ ( )

ໝາຍເຫດ : ໃຫ້ສັດຕິດສຳເນົາ : 1) ໃບທະບຽນວິສາຫະກິດ;

1

แบบฟอม จ (2.3 - สำลับວິສາຫະກິດຮຸ້ນສ່ວນຈຳກັດ)

ຊື່ວິສາຫະກິດ : ........................................;

ໃບທະບຽນວິສາຫະກິດ, ເລກທີ.../.., ລົງວັນທີ......; ລະຫັດວິສາຫະກິດ........................;

ເລກປະຈຳຕົວຜູ້ເສັຍອາກອນ :.........................;

ວິສາຫະກິດ - ພາຍໃນ ( ) / ຮ່ວມທຶນ : ພາຍໃນ (...%), ຕ່າງປະເທດ (...%) / ຕ່າງປະເທດ ( );

ທີ່ຕັ້ງສຳນັກງານ : ບ້ານ ...., ເມືອງ...., ແຂວງ.......;

ເບີໂທຕິດຕໍ່ທາງລັດຖະການ : (ເບີທີໜຶ່ງ ................. ) ແລະ (ເບີທີສອງ...........................).

---

# ລາຍງານ

ສະພາບ(ການມີຕົວຕົນ) ແລະ ຜົນການເຄື່ອນໄຫວທຸລະກິດ ປະຈຳປີ..............

| ເນື້ອໃນ | ໝາຍເຫດ |
|---|---|
| ກ. ສະພາບ (ການມີຕົວຕົນ) ໃນດ້ານທົ່ວໄປ<br>1. ຂາຮຸ້ນທົ່ວໄປ:......ຄົນ; ມູນຄ່າຮຸ້ນ:.................................. ລ້ານກີບ<br>2. ຂາຮຸ້ນຈຳກັດໜີ້ສິນ:......ຄົນ; ມູນຄ່າຮຸ້ນ:............................. ລ້ານກີບ<br>3. ຊື່ ແລະ ນາມສະກຸນຜູ້ຈັດການ (ຜູ້ຕິດຮູບໃນໃບທະບຽນ):..................<br>4. ທຶນຈົດທະບຽນວິສາຫະກິດ :.......................................... ລ້ານກີບ<br>5. ທຶນທັງໝົດຂອງວິສາຫະກິດ:.......................................... ລ້ານກີບ<br>6. ປະເພດທຸລະກິດທີ່ໄດ້ເຄື່ອນໄຫວທຸລະກິດ ຕົວຈິງໃນປີ ລາຍງານ:<br>6.1) ປະເພດທຸລະກິດທີໜຶ່ງ.......<br>6.2) ປະເພດທຸລະກິດທີສອງ...... | |
| 7. ປະເພດທຸລະກິດທີ່ບໍ່ໄດ້ເຄື່ອນໄຫວທຸລະກິດຕົວຈິງ ໃນປີລາຍງານ:<br>7.1) ປະເພດທຸລະກິດທີໜຶ່ງ.......<br>7.2) ປະເພດທຸລະກິດທີສອງ...... | ບົ່ງສາເຫດຂອງການບໍ່ເຄື່ອນໄຫວ:<br>1).......<br>2)......... |
| ຂ. ສະພາບ (ການມີຕົວຕົນ) ໃນດ້ານການເຄື່ອນໄຫວທຸລະກິດ (ໃນປີ) :<br>1. ຕົວເລກທຸລະກິດ (ລວມ):................................................. ລ້ານກີບ<br>2. ຕົວເລກພັນທະດ້ານອາກອນ (ລວມ):...................................... ລ້ານກີບ | |

ຊື່ ແລະ ລາຍເຊັນຜູ້ຈັດການ ( )

ໝາຍເຫດ : ໃຫ້ຄັດຕິດສຳເນົາ : 1) ໃບທະບຽນວິສາຫະກິດ;

แบบฟอม จ (2.4 - ສຳລັບບໍລິສັດຈຳກັດ)

ຊື່ບໍລິສັດ:.................................................. ;

ໃບທະບຽນວິສາຫະກິດ, ເລກທີ.../.., ລົງວັນທີ...... ; ລະຫັດວິສາຫະກິດ..........................;

ເລກປະຈຳຕົວຜູ້ເສຍອາກອນ :.......................... ;

ບໍລິສັດ - ພາຍໃນ ( ) / ຮ່ວມທຶນ: ພາຍໃນ (...%), ຕ່າງປະເທດ (...%) / ຕ່າງປະເທດ ( );

ທີ່ຕັ້ງສຳນັກງານ: ບ້ານ ...., ເມືອງ...., ແຂວງ..... ;

ເບີໂທຕິດຕໍ່ທາງລັດຖະການ: (ເບີທີໜຶ່ງ ....................) ແລະ (ເບີທີສອງ.......................).

# ລາຍງານ

ສະພາບ(ການມີຕົວຕົນ) ແລະ ຜົນການເຄື່ອນໄຫວທຸລະກິດ ປະຈຳປີ..............

| ເນື້ອໃນ | ໝາຍເຫດ |
|---|---|
| ກ. ສະພາບ (ການມີຕົວຕົນ) ໃນດ້ານທົ່ວໄປ<br>1. ຜູ້ຖືຮຸ້ນສາມັນ....ຄົນ; ຈຳນວນຮຸ້ນ:...............ຮຸ້ນ; ມູນຄ່າຮຸ້ນລະ..........ກີບ<br>2. ຜູ້ຖືຮຸ້ນບູລິມະສິດ.......ຄົນ; ຈຳນວນຮຸ້ນ:.......ຮຸ້ນ; ມູນຄ່າຮຸ້ນລະ..........ກີບ<br>3. ຊື່ ແລະ ນາມສະກຸນປະທານສະພາບໍລິຫານ (ຖ້າມີ):...............................<br>4. ຊື່ ແລະ ນາມສະກຸນຜູ້ອຳນວຍການ (ຜູ້ຕິດຮູບໃນໃບທະບຽນ):..................<br>5. ທຶນຈົດທະບຽນວິສາຫະກິດ:.......................................... ລ້ານກີບ<br>6. ທຶນທັງໝົດຂອງວິສາຫະກິດ:.......................................... ລ້ານກີບ<br>7. ປະເພດທຸລະກິດທີ່ໄດ້ເຄື່ອນໄຫວທຸລະກິດ ຕົວຈິງໃນປີ ລາຍງານ:<br>7.1) ປະເພດທຸລະກິດທີໜຶ່ງ.......<br>7.2) ປະເພດທຸລະກິດທີສອງ...... | |
| 8. ປະເພດທຸລະກິດທີ່ບໍ່ໄດ້ເຄື່ອນໄຫວທຸລະກິດຕົວຈິງ ໃນປີລາຍງານ:<br>8.1) ປະເພດທຸລະກິດທີໜຶ່ງ.......<br>8.2) ປະເພດທຸລະກິດທີສອງ...... | ບົ່ງສາເຫດຂອງການບໍ່ເຄື່ອນໄຫວ:<br>1).........<br>2)......... |
| ຂ. ສະພາບ (ການມີຕົວຕົນ) ໃນດ້ານການເຄື່ອນໄຫວທຸລະກິດ (ໃນປີ) :<br>1. ຕົວເລກທຸລະກິດ (ລວມ):....................................................... ລ້ານກີບ<br>2. ຕົວເລກພັນທະດ້ານອາກອນ (ລວມ):................................. ລ້ານກີບ | |

ຊື່ ແລະ ລາຍເຊັນຜູ້ອຳນວຍການ ( )

ໝາຍເຫດ : ໃຫ້ຄັດຕິດສຳເນົາ : 1) ໃບທະບຽນວິສາຫະກິດ;

1

<u>ແບບຟອມ ຈ (2.5 - ສຳລັບບໍລິສັດຈຳກັດຜູ້ດຽວ)</u>

ຊື່ບໍລິສັດ:....................................................... ;

ໃບທະບຽນວິສາຫະກິດ, ເລກທີ.../.., ລົງວັນທີ...... ; ລະຫັດວິສາຫະກິດ..................................;

ເລກປະຈຳຕົວຜູ້ເສຍອາກອນ:........................... ;

ບໍລິສັດ - ພາຍໃນ ( ) / ຮ່ວມທຶນ: ພາຍໃນ (....%), ຕ່າງປະເທດ (......%) / ຕ່າງປະເທດ ( );

ທີ່ຕັ້ງສຳນັກງານ : ບ້ານ ...., ເມືອງ...., ແຂວງ....;

ເບີໂທຕິດຕໍ່ທາງລັດຖະການ : (ເບີທີໜຶ່ງ ................. ) ແລະ (ເບີທີສອງ.........................).

# ລາຍງານ

## ສະພາບ(ການມີຕົວຕົນ) ແລະ ຜົນການເຄື່ອນໄຫວທຸລະກິດ ປະຈຳປີ.............

| ເນື້ອໃນ | ໝາຍເຫດ |
|---|---|
| **ກ. ສະພາບ (ການມີຕົວຕົນ) ໃນດ້ານທົ່ວໄປ**<br>1. ຜູ້ຖືຮຸ້ນ:<br>- ຊື່ ແລະ ນາມສະກຸນຜູ້ຖືຮຸ້ນ:..............................................<br>- ຈຳນວນຮຸ້ນ:...............ຮຸ້ນ ແລະ ມູນຄ່າແຕ່ລະຮຸ້ນ............ ກີບ<br>2. ຊື່ ແລະ ນາມສະກຸນຜູ້ຈັດການ (ຜູ້ຕິດຮູບໃນໃບທະບຽນ):..............................<br>3. ທຶນຈົດທະບຽນວິສາຫະກິດ:............................................. ລ້ານກີບ<br>4. ທຶນທັງໝົດຂອງວິສາຫະກິດ:........................................... ລ້ານກີບ<br>5. ປະເພດທຸລະກິດທີ່ໄດ້ເຄື່ອນໄຫວທຸລະກິດ ຕົວຈິງໃນປີ ລາຍງານ :<br>5.1) ປະເພດທຸລະກິດທີໜຶ່ງ.......<br>5.2) ປະເພດທຸລະກິດທີສອງ...... | |
| 6. ປະເພດທຸລະກິດທີ່ບໍ່ໄດ້ເຄື່ອນໄຫວທຸລະກິດຕົວຈິງ ໃນປີລາຍງານ:<br>6.1) ປະເພດທຸລະກິດທີໜຶ່ງ.......<br>6.2) ປະເພດທຸລະກິດທີສອງ...... | ບົ່ງສາເຫດຂອງການບໍ່ເຄື່ອນໄຫວ:<br>1).......<br>2)......... |
| **ຂ. ສະພາບ (ການມີຕົວຕົນ) ໃນດ້ານການເຄື່ອນໄຫວທຸລະກິດ (ໃນປີ):**<br>1. ຕົວເລກທຸລະກິດ (ລວມ):....................................................... ລ້ານກີບ<br>2. ຕົວເລກພັນທະດ້ານອາກອນ (ລວມ):........................................ ລ້ານກີບ | |

ຊື່ ແລະ ລາຍເຊັນຜູ້ຈັດການ ( )

<u>ໝາຍເຫດ :</u> ໃຫ້ຄັດຕິດສຳເນົາ : 1) ໃບທະບຽນວິສາຫະກິດ;

<u>ແບບຟອມ ຈ (2.6 - ສຳລັບບໍລິສັດມະຫາຊົນ)</u>

ຊື່ບໍລິສັດ: ............................ ; ຈົດທະບຽນໃນຕະຫຼາດຫຼັກຊັບ: ຈົດ ( ) ; ບໍ່ໄດ້ຈົດ ( );

ໃບທະບຽນວິສາຫະກິດ, ເລກທີ.../.., ລົງວັນທີ......; ລະຫັດວິສາຫະກິດ..............................;

ເລກປະຈຳຕົວຜູ້ເສຍອາກອນ:..........................;

ບໍລິສັດ - ພາຍໃນ ( ) / ຮ່ວມທຶນ: ພາຍໃນ (....%), ຕ່າງປະເທດ (....%) / ຕ່າງປະເທດ ( )

ທີ່ຕັ້ງສຳນັກງານ: ບ້ານ ...., ເມືອງ...., ແຂວງ.......;

ເບີໂທຕິດຕໍ່ທາງລັດຖະການ: (ເບີທີໜຶ່ງ.................. ) ແລະ (ເບີທີສອງ.........................).

---

# ລາຍງານ

ສະພາບ(ການມີຕົວຕົນ) ແລະ ຜົນການເຄື່ອນໄຫວທຸລະກິດ ປະຈຳປີ..............

| ເນື້ອໃນ | ໝາຍເຫດ |
|---|---|
| **ກ. ສະພາບ (ການມີຕົວຕົນ) ໃນດ້ານທົ່ວໄປ**<br>1. ຈຳນວນຮຸ້ນ:...............ຮຸ້ນ; ມູນຄ່າຮຸ້ນລະ..........ກີບ<br>2. ຊື່ ແລະ ນາມສະກຸນປະທານສະພາບໍລິຫານ:........................................<br>3. ຊື່ ແລະ ນາມສະກຸນຜູ້ອຳນວຍການ (ຜູ້ຕິດຮູບໃນໃບທະບຽນ):....................<br>4. ທຶນຈົດທະບຽນວິສາຫະກິດ:............................................ ລ້ານກີບ<br>5. ທຶນທັງໝົດຂອງວິສາຫະກິດ:.......................................... ລ້ານກີບ<br>6. ປະເພດທຸລະກິດທີ່ໄດ້ເຄື່ອນໄຫວທຸລະກິດ ຕົວຈິງໃນປີ ລາຍງານ:<br>6.1) ປະເພດທຸລະກິດທີໜຶ່ງ.......<br>6.2) ປະເພດທຸລະກິດທີສອງ...... | |
| 7. ປະເພດທຸລະກິດທີ່ບໍ່ໄດ້ເຄື່ອນໄຫວທຸລະກິດຕົວຈິງ ໃນປີລາຍງານ:<br>7.1) ປະເພດທຸລະກິດທີໜຶ່ງ.......<br>7.2) ປະເພດທຸລະກິດທີສອງ...... | ບົ່ງສາເຫດຂອງການບໍ່ເຄື່ອນໄຫວ:<br>1).......<br>2)......... |
| **ຂ. ສະພາບ (ການມີຕົວຕົນ) ໃນດ້ານການເຄື່ອນໄຫວທຸລະກິດ (ໃນປີ) :**<br>1. ຕົວເລກທຸລະກິດ (ລວມ): ........................................................ ລ້ານກີບ<br>2. ຕົວເລກພັນທະດ້ານອາກອນ (ລວມ):........................................... ລ້ານກີບ | |

ຊື່ ແລະ ລາຍເຊັນຜູ້ອຳນວຍການ ( )

<u>ໝາຍເຫດ :</u> ໃຫ້ຄັດຕິດສຳເນົາ : 1) ໃບທະບຽນວິສາຫະກິດ;

1